ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 609/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 JUN 2012

# ຂໍ້ຕົກລົງ
## ວ່າດ້ວຍການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ

- ອີງຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008 ແລະ ບົດແນະນຳການຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ທຫລ, ລົງວັນທີ 02 ເມສາ 2010;
- ອີງຕາມດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011;
- ອີງຕາມດຳລັດວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009;
- ອີງຕາມລະບຽບການສ້າງຕັ້ງ ແລະ ຄຸ້ມຄອງບໍລິສັດນຳເຂົ້າ-ສົ່ງອອກວັດຖຸມີຄ່າ ສະບັບເລກທີ 01/ທຫລ, ລົງວັນທີ 15 ພຶດສະພາ 2007.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ ດັ່ງນີ້:**

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ ຢູ່ ສປປ ລາວ ໂດຍຜ່ານລະບອບການອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກແບບບໍ່ອັດຕະໂນມັດ. ຈຸດປະສົງໃນການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ ແມ່ນເພື່ອເປັນການຮັບປະກັນຄວາມໝັ້ນຄົງທາງດ້ານເສດຖະກິດເງິນຕາແຫ່ງຊາດ.

**ມາດຕາ 2. ອະທິບາຍຄຳສັບ**

ຄຳສັບໃນຂໍ້ຕົກລົງສະບັບນີ້ "ຄຳແທ່ງ" ໝາຍເຖິງ ຄຳແທ່ງທີ່ສາມາດນຳໃຊ້ເປັນພາຫະນະຊຳລະກັບສາກົນໄດ້ ຊຶ່ງໄດ້ລະບຸໄວ້ໃນໝວດລະຫັດເລກ 7108.12.10 ຂອງສາລະບານອັດຕາພາສີ ຂອງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

ມາດຕາ 3. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສະເພາະການນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ ຢູ່ ສປປ ລາວ.

ໝວດທີ II

ສິດ ແລະ ເງື່ອນໄຂໃນການນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ

ມາດຕາ 4. ສິດ ແລະ ເງື່ອນໄຂໃນການນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຕັ້ງຢູ່ ສປປ ລາວ ຫຼື ຕ່າງປະເທດ ມີສິດນຳເຂົ້າ ຫຼື ສົ່ງອອກ ຄຳແທ່ງ ໂດຍປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

ໝວດທີ III

ລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ

ມາດຕາ 5. ການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ

ການນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ ຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ ຈາກກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ໂດຍປະກອບເອກະສານເພື່ອຂໍອະນຸຍາດ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ຄຳແທ່ງ;
2. ສຳເນົາເອກະສານຕາມແຕ່ລະກໍລະນີ:
   - ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບນິຕິບຸກຄົນທີ່ຢູ່ ສປປ ລາວ);
   - ໃບທະບຽນວິສາຫະກິດອອກໃຫ້ໂດຍທາງການ ຂອງປະເທດກ່ຽວຂ້ອງທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບນິຕິບຸກຄົນທີ່ບໍ່ຢູ່ ສປປ ລາວ).

ກໍລະນີ ເອກະສານເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຈາກສຳນັກງານທະບຽນສານ ຂອງ ສປປ ລາວ.

ມາດຕາ 6. ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ

ການອອກ, ການປ່ຽນແປງ ແລະ ການຕໍ່ອາຍຸຂອງໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ ໃຫ້ປະຕິບັດຕາມດຳລັດວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 7 ກໍລະກົດ 2009. ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ ບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

ການພິຈາລະນາອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ ແມ່ນຂຶ້ນກັບດຸນພິນິດ ຂອງ ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

ມາດຕາ 7. ຄ່າທຳນຽມ ແລະ ຄ່າບໍລິການ

ຜູ້ຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ໃນການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຄຳແທ່ງ ຕາມລະບຽບການຂອງຂະແໜງການກ່ຽວຂ້ອງວາງອອກໃນແຕ່ລະໄລຍະ.

**ມາດຕາ 8. ການສະໜອງເອກະສານໃນເວລານຳເຂົ້າ ແລະ ສົ່ງອອກ ຄຳແທ່ງ**

ໃນເວລານຳເຂົ້າ ແລະ ສົ່ງອອກ ຄຳແທ່ງ ຕົວຈິງ, ຜູ້ນຳເຂົ້າ ຕ້ອງສະແດງເອກະສານໃຫ້ແກ່ເຈົ້າໜ້າທີ່ພາສີ ດັ່ງຕໍ່ໄປນີ້:

1. ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກຄຳແທ່ງ ທີ່ອອກພາຍໃຕ້ຂໍ້ຕົກລົງສະບັບນີ້;
2. ເອກະສານອື່ນໆຕາມລະບຽບການທາງພາສີ.

## ໝວດທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 9. ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ.

**ມາດຕາ 10. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງ 30 ວັນນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

**ສົມພາວ ໄຟສິດ**